ພະຍາກອນ ອຽງຈັນ
19–27°C
ວັນສຸກ 20/11 · ແຈ່ມໃສ

ມະຫາສານ

ລາຍວັນ ◆ MAHAXAN DAILY ◆ mahaxan.com

ໂຄສະນາ
ພື້ນທີ່ໂຄສະນາ
44 × 25 ມມ · ຕິດຕໍ່ WhatsApp 020 5888 6182

ວັນສຸກ 20 ພະຈິກ 2026 · ສະບັບທີ 026 | ສະຫຼຸບຂ່າວປະຈຳວັນພະຫັດ 19 ພະຈິກ 2026 · 24 ຂ່າວ | 19 ໜ້າ · ອ່ານຟຣີ · ສົ່ງຕໍ່ໃຫ້ໝູ່ໄດ້

◆ **ເສດຖະກິດ-ສັງຄົມ** · 09:56 ໂມງ · ອ່ານ 183 ຄັ້ງ

ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ເລີ່ມ 6 ໂມງເຊົ້າ ວັນທີ 19 ພະຈິກ 2026



ແຈ້ງປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ສະບັບເລກທີ 2186/ກຄພພ ລົງວັນທີ 18/11/2026 ເລີ່ມ 6 ໂມງເຊົ້າ ວັນທີ 19 ພະຈິກ 2026

◆ **ຂ່າວຕ່າງປະເທດ** · 14:12 ໂມງ

ພົບຊົນເຜົ່າກາງປ່າອາເມຊອນ ແຍກຕົວຈາກໂລກພາຍນອກ ກັງວົນສ່ຽງໂລກລະບາດ-ບຸກລຸກພື້ນທີ່ປ່າ



ພົບຊົນເຜົ່າ ອາວາ ທີ່ແຍກຕົວຈາກໂລກພາຍນອກ ປະກົດຕົວໃກ້ຊຸມຊົນຊົນພື້ນເມືອງໃນບຣາຊິນ ຫຼັງຈາກໃຊ້ຊີວິດຢູ່ໃນປ່າອາເມຊອນແຍກຕົວຈາກໂລກພາຍນອກ ຜູ້ຊ່ຽວຊານກັງວົນເລື່ອງຄວາມປອດໄພ, ສຸຂະພາບ ແລະ ການບຸກລຸກພື້ນທີ່ປ່າ.

ວັນທີ 18 ພະຈິກ 2026, ກະຊວງກິດຈະການຊົນພື້ນເມືອງຂອງບຣາຊິນ ເປີດເຜີຍວ່າ ໄດ້ເລັ່ງດູແລ ແລະ ຄຸ້ມຄອງຊົນເຜົ່າອາວາ ເຊິ່ງໃຊ້ຊີວິດໃນປ່າອາເມຊອນຕັດຂາດຈາກໂລກພາຍນອກ ຫຼັງສະມາຊິກຊົນເຜົ່າປະມານ 20 ຄົນ ອອກມາປະກົດຕົວໃກ້ຊຸມຊົນຊົນພື້ນເມືອງກົວຈາຈາ ໃນ

ຕໍ່ໜ້າ 2

ໃນສະບັບນີ້

2 ຂ່າວຕ່າງປະເທດ
2 ຂ່າວພາຍໃນ
5 ເສດຖະກິດ-ສັງຄົມ
6 ເຫດການ
8 ເຕັກໂນໂລຊີ
9 ສາລະໜ້າຮູ້
18 ມະຫາສານ ມື້ນີ້: ນ້ຳມັນ, ເງິນ, ຄຳ, ຫວຍ, ອາກາດ
19 ທ້າຍສະບັບ



◆ **ເຫດການ** · 13:19 ໂມງ

ເຕືອນໄພອຸກອາດ! ໂຈນຂີ່ລົດ PCX ໃຊ້ປືນຈີ້ ແລະ ຍິງ ຫວັງຊິ່ງ...

ອ່ານໜ້າ 6 ▸



◆ **ເຫດການ** · 11:34 ໂມງ

ເຈົ້າໜ້າທີ່ບຸກກັກຕົວ ກຸ່ມສໍ້ໂກງຊັບທາງອິນເຕີເນັດ ສັນຊາດເກົາ...

ອ່ານໜ້າ 6 ▸



◆ **ຂ່າວພາຍໃນ** · 14:46 ໂມງ

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ່ ຕິດຕາມ-...

ອ່ານໜ້າ 2 ▸

ໂຄສະນາ
ໃຫ້ແບຣນຂອງທ່ານ ຢູ່ໜ້າ 1 ທຸກເຊົ້າ
ໂຄສະນາໃນ ມະຫາສານ ລາຍວັນ — ໜັງສືພິມ PDF ທີ່ຄົນລາວດາວໂຫຼດ ແລະ ຮັບທາງອີເມວ ທຸກເຊົ້າ
WhatsApp 020 5888 6182

ພົບຊົນເຜົ່າກາງປ່າອາເມຊອນ ແຍກຕົວຈາກໂລກພາຍນອກ ກັງ... (ຕໍ່ຈາກໜ້າ 1)

ເຂດຊົນພື້ນເມືອງອາຣາເຣໂບຢາ ລັດມາຣັນເຢົາ ທາງຕາເວັນອອກສຽງເໜືອຂອງປະເທດ ສ້າງຄວາມກັງວົນກ່ຽວກັບຄວາມປອດໄພ ແລະ ຄວາມສ່ຽງດ້ານສຸຂະພາບຂອງກຸ່ມຊົນເຜົ່ານີ້.

ທາງການບຣາຊິນລະບຸວ່າ ເຫດການທີ່ມີຄົນພົບສະມາຊິກຊົນເຜົ່າອາວາ ເລີ່ມຂຶ້ນເມື່ອວັນຈັນທີ່ຜ່ານມາ ໂດຍຂໍ້ມູນເບື້ອງຕົ້ນພົບວ່າມີສະມາຊິກຊົນເຜົ່າອາວາ ປະມານ 20 ຄົນ ຍ່າງເຂົ້າໄປໃນບໍລິເວນໃກ້ຈຸດຄວບຄຸມການເຂົ້າເຖິງພື້ນທີ່ຂອງລັດຖະບານ ແລະ ບ້ານທາວາຣີຂອງຊົນເຜົ່າກົວຈາຈາຣາ ຂະນະທີ່ເຈົ້າໜ້າທີ່ກຳລັງກວດສອບສະຖານະການ.

ລາຍງານຂ່າວລະບຸວ່າ ຈາກພາບວິດີໂອທີ່ສະມາຊິກຊຸມຊົນກົວຈາຈາຣາບັນທຶກໄວ້ ແລະ ເຜີຍແຜ່ໂດຍອົງການ ເຊໄວໂອ ອິນເຕີເນຊັນແນລ ສະແດງໃຫ້ເຫັນຜູ້ໃຫຍ່ ແລະ ເດັກຊົນເຜົ່າອາວາລວມຕົວກັນຢູ່ທ່າມກາງພືດພັນໜາທຶບ ບາງຄົນຖືຄັນທະນູ ແລະ ລູກສອນ ສວມເຄື່ອງປະດັບຫົວຈາກຂົນນົກ ແລະ ສາຍຄໍ ຂະນະທີ່ບາງຄົນບໍ່ໄດ້ນຸ່ງເຄື່ອງ.

ຢ່າງໃດກໍຕາມ, ສາເຫດທີ່ຊົນເຜົ່າອາວາປະກົດຕົວໃກ້ຊຸມຊົນອື່ນຍັງບໍ່ທັນເປັນທີ່ແນ່ນອນ ແຕ່ທາງອົງການ ເຊໄວໂອ ອິນເຕີເນຊັນແນລ ລະບຸວ່າ ພວກເຂົາໜ້າຈະເຂົ້າໄປພົບເຈົ້າໜ້າທີ່ລັດຖະບານເພື່ອຂໍມັນຕົ້ນ ກ່ອນນຳກັບເຂົ້າໄປໃນປ່າ. ທັງນີ້, ຊົນເຜົ່າອາວາໃຊ້ຊີວິດດ້ວຍການລ່າສັດ, ຕົກປາ ແລະ ເກັບຫາອາຫານ ໂດຍຫຼີກລ່ຽງການຕິດຕໍ່ກັບບຸກຄົນພາຍນອກມາເປັນເວລາຫຼາຍສິບປີ.

ທາງການບຣາຊິນລະບຸວ່າ ຊົນເຜົ່າອາວາຢູ່ໃນຖານຂໍ້ມູນກຸ່ມຊົນພື້ນເມືອງທີ່ແຍກຕົວຈາກພາຍນອກຢ່າງເປັນທາງການແລ້ວ ແລະ ຢູ່ພາຍໃຕ້ການຕິດຕາມຂອງທີມຄຸ້ມຄອງສະເພາະທາງຈາກ ຟູໄນ ເຊິ່ງເປັນໜ່ວຍງານກົດຈະການຊົນພື້ນເມືອງຂອງລັດຖະບານກາງ. ຂະນະນີ້ເຈົ້າໜ້າທີ່ຟູໄນ ແລະ ບຸກຄະລາກອນດ້ານສາທາລະນະສຸກສຳລັບຊົນພື້ນເມືອງໄດ້ລົງພື້ນທີ່ ພ້ອມເປີດກົນໄກປະສານງານສຸກເສີນເພື່ອປະເມີນຄວາມສ່ຽງຈາກການຕິດຕໍ່ ແລະ ບັນຫາສຸຂະພາບທີ່ອາດເກີດຂຶ້ນ.

ອົງການ ເຊໄວໂອ ອິນເຕີເນຊັນແນລ ເຄີຍປະເມີນວ່າ ຍັງມີຊົນເຜົ່າອາວາປະມານ 100 ຄົນທີ່ບໍ່ເຄີຍຕິດຕໍ່ກັບບຸກຄົນພາຍນອກ ຂະນະທີ່ສະມາຊິກຊົນເຜົ່າອາວາອີກສ່ວນໜຶ່ງອາໄສຢູ່ໃນບ້ານທີ່ຕັ້ງຖິ່ນຖານ ແລະ ຕິດຕໍ່ກັບໂລກພາຍນອກແລ້ວ. ຂະນະທີ່ຜູ້ຊ່ຽວຊານກັງວົນວ່າ ຊົນເຜົ່າທີ່ແຍກຕົວຈາກສັງຄົມພາຍນອກອາດສ່ຽງຕໍ່ໂລກຕິດເຊື້ອເປັນພິເສດ ເນື່ອງຈາກມີໂອກາດສຳຜັດເຊື້ອໂລກທີ່ແຜ່ຫຼາຍໃນປະຊາກອນທົ່ວໄປຂ້ອນຂ້າງຈຳກັດ. ຂະນະດຽວກັນ, ພື້ນທີ່ປ່າທີ່ພວກເຂົາອາໄສຢູ່ຍັງປະເຊີນການຕັດໄມ້, ລ່າສັດຜິດກົດໝາຍ ແລະ ການບຸກລຸກຮຸນແຮງອື່ນ.

ຂະນະທີ່ ກະຊວງກົດຈະການຊົນພື້ນເມືອງຢ້ຳວ່າ ນະໂຍບາຍຂອງລັດຖະບານບໍ່ແມ່ນການສົ່ງເສີມໃຫ້ເກີດການຕິດຕໍ່ກັບຊົນເຜົ່າອາວາ ແຕ່ເປັນການຄຸ້ມຄອງສິດໃນການໃຊ້ຊີວິດຢ່າງໂດດດ່ຽວ ແລະ ເປີດໂອກາດໃຫ້ພວກເຂົາຕັດສິນໃຈດ້ວຍຕົນເອງວ່າຈະຕິດຕໍ່ກັບບຸກຄົນພາຍນອກຫຼືບໍ່ ພ້ອມເຕືອນວ່າການພົບປະພຽງຊ່ວງສັ້ນໆ ບໍ່ໄດ້ໝາຍຄວາມວ່າຊົນເຜົ່ານີ້ລະຖິ້ມວິຖີຊີວິດເດີມ ຫຼື ຕ້ອງການຕິດຕໍ່ກັບໂລກພາຍນອກຢ່າງຖາວອນ.

ແຫຼ່ງຂ່າວ: BBC

ຂ່າວພາຍໃນ

◆ **ຂ່າວພາຍໃນ** · 14:46 ໂມງ · ອ່ານ 14 ຄັ້ງ

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ່ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ



ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີ ກະຊວງ ໂຍທາທິການ ແລະ ຂົນສົ່ງ ພ້ອມຄະນະລົງຕິດຕາມໂຄງການກໍ່ສ້າງ ທາງ ດ່ວນ ວຽງຈັນ - ຮ່າໂມ້ຍ.

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ່ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ

ໃນວັນທີ 19 ພະຈິກ 2026 ທ່ານ ເຫຼັກໄຫຼ ສີວິໄລ ລັດຖະມົນຕີກະຊວງ ໂຍທາທິການ ແລະ ຂົນສົ່ງ ພ້ອມຄະນະ ໂດຍມີ ທ່ານ ພົນຕີ ກອງສະຫວັດ ບຸນລັງ ຮອງລັດຖະມົນຕີກະຊວງ ປ້ອງກັນຄວາມສະຫງົບ, ທ່ານ ປອ ເຂັງຄຳ ແກ້ວໝູຈັນ ຮອງລັດຖະມົນຕີ ຮອງຫົວໜ້າ ຫ້ອງວ່າການສຳນັກງານນາຍົກ, ທ່ານ ຄຳແຫວນ ປັນຍານຸວົງ ປະທານຄະນະກຳມະການປົກຄອງແຂວງ ບໍລິຄຳໄຊ,ທ່ານ ຊົມຊື່ນ ໄຊເກີຍາຈິງຕົວ ຮອງປະທານອົງການກວດກາແຫ່ງລັດ, ທ່ານ ບຸນເລີດ ເທບວົງສາ ຮອງປະທານ ອົງການກວດສອບ ພ້ອມດ້ວຍຄະນະນຳຈາກກະຊວງ ຍທຂ, ກະຊວງ ກະສິກຳ ແລະ ສິ່ງແວດລ້ອມ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ຕໍ່ໜ້າ 3

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ ຕິດຕາມ-... (ຕໍ່ຈາກໜ້າ 2)

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ

ໂຄງການກໍ່ສ້າງ ທາງດ່ວນ ວຽງຈັນ - ຮ່າໂມ້ຍ ລວຍາວ 203.8 ກິໂລແມັດ, ກວມເອົາ 28 ບ້ານໃນ 4 ຕົວເມືອງ ຂອງ ແຂວງ ບໍລິຄຳໄຊ ປັດຈຸບັນ ມີຄວາມຄືບໜ້າ:

ການລົງຕິດຕາມຄັ້ງນີ້ ເພື່ອກວດກາ ຊຸກຍູ້ໂຄງການ ຕິດຕາມ ຄວາມຄືບໜ້າ ຜົນສຳເລັດ ຂໍ້ສະດວກ ຂໍ້ຫຍຸ້ງຍາກຂອງ ໂຄງການ ເພື່ອແນໃສ່ຊຸກຍູ້ສົ່ງເສີມ ໃຫ້ ການຊ່ວຍເຫລືອໃນການຈັດ ຕັ້ງປະຕິບັດ ແຜນຍຸດທະສາດການຄ້າຜ່ານຂອງ ສປປ ລາວ ເພື່ອອອກຈາກສະຖານະພາບດ້ອຍ ພັດທະນາ (STS).

ໃນຂະນະດຽວກັນ, ທ່ານ ນອິກນາຊິໂອ ກາສຊິດ ກໍໄດ້ສະແດງຄວາມປິຕິຍິນດີ ທີ່ໄດ້ມີໂອກາດພົບປະກັບ ທ່ານປະທານ ປະເທດແຫ່ງ ສປປ ລາວ. ຝ່າຍສະວິດ ສະແດງຄວາມຍິນດີທີ່ຈະສືບຕໍ່ ສະໜັບສະໜຸນ ສປປ ລາວ ພາຍຫລັງ ອອກຈາກ ສະຖານະພາບປະເທດດ້ອຍ ພັດທະນາ, ການພັດທະນາແບບຍືນຍົງ ແລະ ຍິນດີຈະສຶກສາຄວາມເປັນໄປໄດ້ໃນ ການຮ່ວມມືໃນຂົງເຂດໃໝ່ໃນອະນາຄົດ ໂດຍສະ ເພາະດ້ານເສດຖະກິດ ແລະ ການລົງທຶນ. ພ້ອມກັນນີ້, ສອງຝ່າຍຍັງໄດ້ ເຫັນດີຈະສືບຕໍ່ຈັດຕັ້ງປະຕິບັດກົນໄກການ ຮ່ວມມືສອງຝ່າຍ ທີ່ມີຮ່ວມກັນຢູ່ແລ້ວ ເຊັ່ນ: ກອງປະຊຸມປຶກສາຫາລືທາງດ້ານ ການເມືອງລາວ-ສະວິດ ແລະ ອື່ນໆ ເພື່ອ ປະກອບສ່ວນໃຫ້ແກ່ຜົນສຳເລັດຂອງການ ຮ່ວມມືໃນຊຸມປີຕໍ່ໜ້າ.

ການພົບປະໃນຄັ້ງນີ້ ເຕັມໄປດ້ວຍ ບັນຍາກາດດີ, ໃກ້ຊິດຕິດແທດ ແລະ ສະໜິດສະໜົມ, ພ້ອມທັງມີຄວາມໝາຍ ໝັ້ນ ທີ່ຈະສືບຕໍ່ຮັດແໜ້ນການຮ່ວມມື ສອງຝ່າຍ ໃຫ້ເຕີບໃຫຍ່ຂະຫຍາຍຕົວ ໃນອະ ນາຄົດ ເພື່ອຮັບປະກັນໃຫ້ແກ່ຜົນ ປະໂຫຍດຮ່ວມກັນລະຫວ່າງ ສອງປະເທດ ກໍຄື ປະຊາຊົນສອງຊາດ.

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ

ໂຄງການກໍ່ສ້າງ ທາງດ່ວນ ວຽງຈັນ - ຮ່າໂມ້ຍ ລວຍາວ 203.8 ກິໂລແມັດ, ກວມເອົາ 28 ບ້ານໃນ 4 ຕົວເມືອງ ຂອງ ແຂວງ ບໍລິຄຳໄຊ ປັດຈຸບັນ ມີຄວາມຄືບໜ້າ:

ການລົງຕິດຕາມຄັ້ງນີ້ ເພື່ອກວດກາ ຊຸກຍູ້ໂຄງການ ຕິດຕາມ ຄວາມຄືບໜ້າ ຜົນສຳເລັດ ຂໍ້ສະດວກ ຂໍ້ຫຍຸ້ງຍາກຂອງ ໂຄງການ ເພື່ອແນໃສ່ຊຸກຍູ້ສົ່ງເສີມ ໃຫ້ ທ່ານ ວິໄຊ ພູມີ ຫົວໜ້າພະແນກ ໂຍທາທິການ ແລະ ຂົນສົ່ງແຂວງ ບໍລິຄຳ ໄຊ ໄດ້ລາຍງານຄວາມຄືບໜ້າ ການຈັດຕັ້ງ ປະຕິບັດໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍຊ່ວງທີ 2, ແຕ່ເມືອງປາກຊັນ ຫາ ຊາຍແດນ ລາວ-ຫວຽດນາມ.

ທາງດ່ວນຊ່ວງທີ 2 ມີຈຸດເລີ່ມຕົ້ນຢູ່ ກິໂລແມັດ 0+000 (ບ້ານທົ່ງໃຫຍ່ເມືອງ ປາກຊັນ) ຫາ ຊາຍແດນລາວ-ຫວຽດນາມ (ແຫ້ງຖຽ), ເມືອງໄຊຈຳພອນ, ແຂວງບໍລິ ຄຳໄຊ. ມີລວຍາວປະມານ 203.8 ກິໂລ ແມັດ, ກວມເອົາ 4 ຕົວເມືອງ, ມີ 28 ບ້ານ (ເມືອງປາກຊັນ, ເມືອງບໍລິຄັນ, ເມືອງວຽງທອງ ແລະ ເມືອງໄຊຈຳພອນ).

ຄວາມຄືບໜ້າການຈັດຕັ້ງປະຕິບັດ ໂຄງການ ວຽກການກໍ່ສ້າງ ມີຄວາມຄືບ ໜ້າພໍສົມຄວນ (ຍັງບໍ່ສາມາດສະຫລຸບ ບໍລິມາດແລະຄິດໄລ່ເປັນເປີເຊັນຄວາມຄືບ ໜ້າໄດ້)

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ

ກະຊວງໂຍທາທິການ ແລະ ຂົນສົ່ງ ນຳຄະນະລົງພື້ນທີ ຕິດຕາມ-ກວດກາ ຄວາມຄືບໜ້າໂຄງການກໍ່ສ້າງທາງດ່ວນ ວຽງຈັນ-ຮ່າໂມ້ຍ

ຂ່າວ: ກະຊວງ ໂຍທາທິການ ແລະ ຂົນສົ່ງ

◆ **ຂ່າວພາຍໃນ** · 11:04 ໂມງ · ອ່ານ 10 ຄັ້ງ

ປະທານປະເທດແຫ່ງ ສປປ ລາວ ພົບປະກັບ ຮອງປະທານາທິບໍດີ ແຫ່ງ ສະມາພັນທະລັດ ສະວິດ



ໃນຕອນບ່າຍວັນທີ 15 ພະຈິກ 2026 ທີ່ ນະຄອນຫລວງພະນົມເປັນ, ລາຊະອານາຈັກ ກຳປູເຈຍ ທ່ານ ທອງລຸນ ສີສຸລິດ ປະທານປະເທດ ແຫ່ງ ສປປ ລາວ ໄດ້ພົບປະກັບ ທ່ານ ອິກນາຊິໂອ ກາສຊິດ (Ignazio Cassis) ຮອງປະທານາທິບໍດີ ແຫ່ງ ສະມາພັນທະລັດ ສະວິດ ໃນໂອກາດເດີນທາງເຂົ້າຮ່ວມກອງປະຊຸມສຸດຍອດ ຝຣັ່ງໂກໂຟນີ ຄັ້ງທີ XX.


ການພົບປະຄັ້ງນີ້, ເປັນຂີດໝາຍສຳຄັນໃນການສືບຕໍ່ ເສີມຂະຫຍາຍ ສາຍພົວພັນມິດຕະພາບ ແລະ ການຮ່ວມມື ອັນດີທີ່ມີມາແຕ່ດົນນານ ລະຫວ່າງ ສປປ ລາວ ແລະ ສະມາ ພັນທະລັດສະວິດ ນັບແຕ່ສ້າງຕັ້ງສາຍພົວພັນການທູດ ຮ່ວມກັນໃນປີ 1963. ສປປ ລາວ ຖືວ່າສະມາພັນທະລັດ ສະວິດ ແມ່ນໜຶ່ງໃນບັນດາປະເທດຄູ່ຮ່ວມມືເພື່ອການ ພັດທະນາທີ່ສຳຄັນ ແລະ ໃຫ້ການ ສະໜັບສະໜຸນ ສປປ ລາວ ທັງໃນຂອບ ສອງຝ່າຍ ແລະ ຜ່ານການຮ່ວມມືໃນຂອບ ຫລາຍຝ່າຍ ເປັນຕົ້ນ ການຊ່ວຍເຫລືອ ນັບ ແຕ່ປີ 2006-2025 ລວມມູນຄ່າທັງໝົດ 307 ລ້ານໂດລາສະຫະລັດ. ພ້ອມກັນນີ້, ທ່ານ ທອງລຸນ ສີສຸລິດ ຍັງໄດ້ຊຸກຍູ້ໃຫ້ ສະມາພັນທະລັດສະວິດ ສືບຕໍ່ໃຫ້ການ ສະໜັບສະໜຸນ ສປປ ລາວ ອອກຈາກ ສະຖາ ນະພາບປະເທດດ້ອຍພັດທະນາ ໃນທ້າຍປີ 2026 ໂດຍສະເພາະ ແມ່ນ

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວພາຍໃນ · 10:21 ໂມງ · ອ່ານ 7 ຄັ້ງ

ປກສ ແຂວງຈຳປາສັກ ບຸກຈັບສະແກມເມີ ສັນຊາດຈີນ ໄດ້ 17 ຄົນ ຢູ່ເມືອງປາກຊ່ອງ



ໃນຄັ້ງວັນທີ 17 ພະຈິກ 2026 ເວລາ 08 ໂມງ ເຈົ້າໜ້າທີ່ວິຊາສະເພາະພະແນກຕຳຫຼວດຄຸ້ມຄອງຄົນຕ່າງປະເທດ ຫ້ອງສັນຕິບານ ປກສ ແຂວງຈຳປາສັກ ສົມທົບກັບເຈົ້າໜ້າທີ່ພະແນກສັນຕິບານ ປກສ ເມືອງປາກຊ່ອງ ຕາແສງເຊນ້ຳນ້ອຍ ແລະ ອຳຍາດການປົກຄອງບ້ານ ຕາໂອດ ເມືອງປາກຊ່ອງ ໄດ້ເຄື່ອນໄຫວກວດກາຈຸດພັກເຊົາຂອງຄົນຕ່າງປະເທດສາມາດພົບເຫັນ ຜູ້ທີ່ສົງໃສ່ເຄື່ອນໄຫວກ່ຽວຂ້ອງຍາກຳທາງດ້ານອິນເຕີເນັດ ເປັນຄົນສັນຊາດຈີນ ຈຳນວນ 17ຄົນ ຍິງ 2ຄົນ ແລະໄດ້ກວດກາສະຖານທີ່ ດັ່ງກ່າວໄດ້ພົບເຫັນເຄື່ອງຂອງກາງ ປະກອບມີ: ຄອມພິວເຕີ້ຕັ້ງໂຕະ ຈຳນວນ 59 ໜ່ວຍ , ຄອມພິວເຕີ້ໂນດບຸກ ຈຳນວນ 02 ໜ່ວຍ, ໂທລະສັບ ຈຳນວນ 160 ໜ່ວຍ, ເຄື່ອງດູດສັນຍານ ສະຕາລິງ 05 ແຜ່ນ.

ບຸກຈັບສະແກມເມີ ສັນຊາດຈີນ ໄດ້ 17 ຄົນ ຢູ່ເມືອງປາກຊ່ອງ

ບຸກຈັບສະແກມເມີ ສັນຊາດຈີນ ໄດ້ 17 ຄົນ ຢູ່ເມືອງປາກຊ່ອງ

ສ່ວນຄະດີດັ່ງກ່າວ ຍັງຢູ່ໃນຂັ້ນຕອນດຳເນີນການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ ວິຊາສະເພາະ.

ຂ່າວ: ປກສ ແຂວງຈຳປາສັກ

ໂຄສະນາ

ບໍ່ມີເວລາອ່ານ? ກົດຟັງໄດ້ເລີຍ

ທຸກຂ່າວໃນ mahaxan.com ມີສຽງອ່ານພາສາລາວ — ຟັງຂະນະຂັບລົດ ຫຼື ເຮັດວຽກ. ເປີດຂ່າວໃດກໍໄດ້ ແລ້ວກົດ ▶ ຟັງ.

ຂ່າວພາຍໃນ · 10:35 ໂມງ · ອ່ານ 4 ຄັ້ງ

ກວດພົບ 4 ສາເຫດຫຼັກ ຈາກໂຄງການບໍ່ແຮ່ ທີ່ເຮັດໃຫ້ນ້ຳຊອງຂຸ່ນ



ຄະນະສະເພາະກິດຂັ້ນສູນກາງ ລົງກວດກາໂຄງການແຮ່ທາດເຂດຊາຍແດນແຂວງວຽງຈັນ ແລະ ໄຊສົມບຸນ ພົບ 4 ສາເຫດສຳຄັນຈາກການບຸກເບີກເສັ້ນທາງ, ການຕັນສາຍຫ້ວຍ ແລະ ການປ່ອຍນ້ຳເສຍລົງສູ່ສາຍນ້ຳ ເຮັດໃຫ້ນ້ຳຊອງຂຸ່ນ.

ວັນທີ 11 ພະຈິກ 2026: ຄະນະສະເພາະກິດຂັ້ນສູນກາງ ໄດ້ລົງຕິດຕາມ ແລະ ກວດກາບັນດາໂຄງການແຮ່ທາດ ຢູ່ຕາມເຂດຊາຍແດນແຂວງວຽງຈັນ ແລະ ແຂວງໄຊສົມບຸນ ທີ່ສົ່ງຜົນກະທົບຕໍ່ສາຍນ້ຳສາຂາທີ່ໄຫຼລົງສູ່ນ້ຳຊອງ ເຊິ່ງເຮັດໃຫ້ນ້ຳຊອງເກີດມີສີຂຸ່ນ.

ສະຫຼຸບ 4 ສາເຫດຫຼັກ ທີ່ກວດພົບຈາກການລົງພື້ນທີ່

1. ການບຸກເບີກເສັ້ນທາງ ເຮັດໃຫ້ດິນເຟື້ອຍໄຫຼລົງນ້ຳ. ໂຄງການຊອກຄົ້ນ-ສຳຫຼວດ ແລະ ຂຸດຄົ້ນ-ປຸງແຕ່ງແຮ່ຄຳ ຂອງບໍລິສັດ ດວງຈະເລີນ ມາຍນິ້ງ ຈຳກັດຜູ້ດຽວ ຮ່ວມກັບບໍລິສັດ ລາວ ໄຫຊານ ມາຍນິ້ງ ຈຳກັດຜູ້ດຽວ ໄດ້ຕັດພື້ນທີ່ດິນ ແລະ ປາດໜ້າທາງ. ເມື່ອມີຝົນຕົກໜັກ ຈຶ່ງເຮັດໃຫ້ນ້ຳຊະເອົາດິນເຟື້ອຍຈຳນວນຫຼາຍໄຫຼລົງສູ່ນ້ຳຊອງ ຈົນເກີດມີຕະກອນດິນແດງຂຸ່ນ.

2. ການຕັນສາຍຫ້ວຍ ເພື່ອເຮັດອ່າງເກັບນ້ຳ. ບໍລິສັດ ດາວຈະເລີນ ສຳຫຼວດອອກແບບກໍ່ສ້າງ ຂົວ-ທາງ ແລະ ເຄຫາສະຖານ ຈຳກັດຜູ້ດຽວ ໄດ້ດຳເນີນການຕັນສາຍຫ້ວຍ ເພື່ອສ້າງເປັນອ່າງເກັບນ້ຳ.

3. ການປ່ອຍນ້ຳເສຍຈາກການລ້າງແຮ່. ບໍລິສັດ ລີ ກໍ່ສ້າງ ສຳຫຼວດ ແລະ ອອກແບບ ຈຳກັດຜູ້ດຽວ ທີ່ດຳເນີນກິດຈະການລ້າງແຮ່ຢູ່ເຂດນ້ຳຊອງ ໄດ້ມີການປ່ອຍນ້ຳເສຍລົງສູ່ສາຍນ້ຳຊອງໂດຍກົງ.

4. ລະບົບກັ້ນຕອງ ແລະ ຝາຍກັ້ນນ້ຳບໍ່ໄດ້ມາດຕະຖານ. ບໍລິສັດ ໄທ ຢຸ້ຍ ການ ສີ ຂຸດຄົ້ນບໍ່ແຮ່ ຈຳກັດ ເຊິ່ງດຳເນີນກິດຈະການຂຸດຄົ້ນແຮ່ເຫຼັກ ຈຳນວນ 3 ໂຮງງານ ພົບວ່າປະສິດທິພາບໃນການກັ່ນຕອງສິ່ງເສດເຫຼືອຈາກການລ້າງແຮ່ຍັງບໍ່ສູງ ແລະ ຝາຍກັ້ນນ້ຳຍັງບໍ່ໄດ້ຄຸນນະພາບ.

ແນວທາງການແກ້ໄຂ ແລະ

ຕໍ່ໜ້າ 5

ກວດພົບ 4 ສາເຫດຫຼັກ ຈາກໂຄງການບໍ່ແຮ່ ທີ່ເຮັດໃຫ້ນ້ຳຊອງຂຸ່... (ຕໍ່ຈາກໜ້າ 4)

ຕິດຕາມຕໍ່ໄປ

ຜ່ານການລົງເກັບກຳຂໍ້ມູນຕົວຈິງ, ຄະນະສະເພາະກິດຂັ້ນສູນກາງ ໄດ້ມອບໝາຍຄວາມຮັບຜິດຊອບໃຫ້ ອົງການປົກຄອງທ້ອງຖິ່ນ ແຂວງວຽງຈັນ ແລະ ແຂວງໄຊສົມບຸນ ສືບຕໍ່ແກ້ໄຂບັນດາຂໍ້ຄົງຄ້າງດັ່ງກ່າວໃຫ້ສຳເລັດ. ພ້ອມທັງຕິດຕາມສະພາບນ້ຳຊອງຢ່າງໃກ້ຊິດ ເພື່ອລາຍງານຄວາມຄືບໜ້າຕໍ່ລັດຖະບານໃນແຕ່ລະໄລຍະ.

ເສດຖະກິດ-ສັງຄົມ

◆ ເສດຖະກິດ-ສັງຄົມ · 01:00 ໂມງ · ອ່ານ 9 ຄັ້ງ

ລົງນາມສັນຍາພັດທະນາໂຄງການໄຟຟ້າລົມ ອີລະອາດສະພອມ ຂະໜາດ 1.275 ເມກາວັດ ຢູ່ ສະຫວັນນະເຂດ



ພິທີລົງນາມຈັດຂຶ້ນໃນວັນທີ 17 ພະຈິກ 2026 ທີ່ ໂຮງແຮມແລນມາກ ນະຄອນຫລວງວຽງຈັນ.

ພິທີລົງນາມຈັດຂຶ້ນໃນວັນທີ 17 ພະຈິກ 2026 ທີ່ ໂຮງແຮມແລນມາກ ນະຄອນຫລວງວຽງຈັນ ໂດຍມີ ທ່ານ ນາງ ພອນວັນ ອຸທະວົງ ຮອງປະທານຄະນະກຳມະການ ສົ່ງເສີມ ແລະ ຄຸ້ມຄອງການລົງທຶນ, ພ້ອມດ້ວຍຜູ້ຕາງໜ້າ ຈາກລັດຖະບານ, ສະພາແຫ່ງຊາດ, ບັນດາກະຊວງ, ຄະ ນະ ກຳມະການ, ກົມກອງ ແລະ ພາກສ່ວນກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ຄຳສະຫວາດ ບຸນວິໄລ ຜູ້ອຳນວຍການ ບໍລິສັດ ນາແສງວາໂຍ ລົງທຶນ ແລະ ພັດທະນາຊັບພະຍາກອນທິດ ແທນ ຈຳກັດ .

ທ່ານ ຄຳສະຫວາດ ບຸນວິໄລ ຜູ້ອຳນວຍການ ບໍລິສັດ ນາແສງວາໂຍ ລົງທຶນ ແລະ ພັດທະນາຊັບພະຍາກອນທິດ ແທນ ຈຳກັດ ໄດ້ກ່າວວ່າ: ສັນຍາ PDA ສະບັບນີ້ເປັນການສືບຕໍ່ຈາກບົດບັນທຶກ ຄວາມເຂົ້າໃຈ (MOU) ທີ່ລົງນາມໃນ ວັນທີ 13 ພະຈິກ 2023 ໂດຍກຳນົດ ກອບການຮ່ວມມືໃນການສຶກສາ ແລະ ກະກຽມພັດທະນາໂຄງການເປັນເວລາ 24 ເດືອນ ນັບແຕ່ວັນລົງນາມ ເພື່ອເປັນ ພື້ນຖານສຳລັບການຕັດສິນໃຈລົງທຶນໃນ ຂັ້ນຕໍ່ໄປ. ໂຄງການມີພື້ນທີ່ສຶກສາຢູ່ 3 ເມືອງ ຄື: ເມືອງວິລະບູລີ, ເມືອງອາດສະ ພອນ ແລະ ເມືອງພີນ ໂດຍມີກຳລັງການ ຕິດຕັ້ງລວມທີ່ຄາດໄວ້ປະມານ 1.275 ເມກາວັດ. ຂະໜາດ ແລະ ທີ່ຕັ້ງຂອງສິ່ງ ປຸກສ້າງຈະກຳນົດຕາມຜົນການປະເມີນ ຊັບພະຍາກອນລົມ, ສະພາບພື້ນທີ່, ຂໍ້ ກຳນົດດ້ານສິ່ງແວດລ້ອມ-ສັງຄົມ ແລະ ຄວາມສາມາດໃນການເຊື່ອມຕໍ່ ແລະ ຈຳໜ່າຍໄຟຟ້າ. ໂຄງການມຸ່ງເນັ້ນນຳໃຊ້ທ່າ ແຮງລົມຂອງແຂວງສະຫວັນນະເຂດ ເພື່ອ ຜະລິດໄຟຟ້າສະອາດສະໜອງໃຫ້ຕະຫຼາດ ໃນພາກພື້ນ, ສົ່ງເສີມການຮ່ວມມືດ້ານ ພະລັງງານຂ້າມຊາຍແດນ ແລະ ສ້າງລາຍ ຮັບຈາກການສົ່ງອອກໃຫ້ແກ່ ສປປ ລາວ ເມື່ອມີເງື່ອນໄຂຄົບຖ້ວນ ແລະ ໂຄງ ການ ຖືກຈັດຕັ້ງປະຕິບັດ. ນອກນັ້ນ ຍັງຄາດວ່າ ຈະສ້າງວຽກເຮັດງານທຳ, ເພີ່ມຄວາມ ຕ້ອງການສິນຄ້າ ແລະ ບໍລິການທ້ອງຖິ່ນ ພ້ອມທັງສ້າງລາຍຮັບໃຫ້ແກ່ລັດຕາມ ລະບຽບການ.

ທ່ານ ແອນດຣູ ຊັດເທີແລນ ຜູ້ ອຳ ນ ວ ຍ ກ ານ ກຸ່ ມ ບໍ ລິ ສັ ດ UPC Vietnam (Singapore) Pte. Ltd

ທ່ານ ແອນດຣູ ຊັດເທີແລນ ຜູ້ ອຳ ນ ວ ຍ ກ ານ ກຸ່ ມ ບໍ ລິ ສັ ດ UPC Vietnam (Singapore) Pte. Ltd ກ່າວວ່າ: ໂຄງການນີ້ຈະຊ່ວຍເພີ່ມຄວາມ ໝັ້ນຄົງດ້ານພະລັງງານໃຫ້ແກ່ ສປປ ລາວ ໂດຍສະໜອງພະລັງງານສະອາດທີ່ຜະລິດ ພາຍໃນປະເທດ ແລະ ມີຄວາມໝັ້ນຄົງ ເຂົ້າສູ່ລະບົບຕາຂ່າຍໄຟຟ້າແຫ່ງຊາດ ພ້ອມ ສະໜັບສະໜູນເປົ້າໝາຍຂອງລາວໃນການ ກ້າວສູ່ການເປັນ “ໝໍ້ໄຟສີຂຽວແຫ່ງອາຊີ ຕ ເ ວັ ນ ອ ອ ກ ສ ່ ງ ໃ ຕ້ ” (Green Battery of Southeast Asia).

ທ່ານ ກ່ າ ວ ຕື ່ ມ ວ ່ າ ໃ ນ ດ ້ ານ ເສດຖະກິດ ໂຄງການນີ້ເປັນການລົງທຶນ ໂດຍກົງຈາກຕ່າງປະເທດໄລຍະຍາວທີ່ ສຳຄັນ ໂດຍຄາດວ່າຈະສ້າງລາຍຮັບຈາກຄ່າ ພາກຫຼວງ ແລະ ພາສີອາກອນເຂົ້າງົບ ປະມານແຫ່ງຊາດຕະຫຼອດໄລຍະ 25 ປີ ຂ້າງໜ້າ. ສຳລັບປະຊາຊົນແຂວງສະຫວັນ ນະເຂດ ໂຄງການຈະສ້າງໂອກາດຈ້າງງານທີ່ ຕ້ອງການທັກສະຫລາຍຮ້ອຍຕຳ ແໜ່ງໃນ ໄລຍະກໍ່ສ້າງ ແລະ ດຳເນີນງານ, ເພີ່ມ ໂອກາດໃຫ້ແກ່ທຸລະກິດ ແລະ ຜູ້ສະໜອງ ສິນຄ້າພາຍໃນປະເທດ ພ້ອມທັງລົງທຶນຢ່າງ ຍືນຍົງໃນພື້ນຖານໂຄງລ່າງຂອງຊຸມຊົນ ທ້ອງຖິ່ນ. ສິ່ງເຫລົ່ານີ້ຈະໄດ້ຮັບການສະ ໜັບສະໜູນເພີ່ມເຕີມຜ່ານຄຳໝັ້ນສັນຍາ ຂອງບໍລິສັດໃນການສະໜອງທຶນໃຫ້ແກ່ ໂຄງການຄວາມຮັບຜິດຊອບຕໍ່ສັງຄົມ (CSR).


ທ່ານລະບຸວ່າ ໂຄງການທີ່ດີຕ້ອງ ອາໄສ 3 ປັດໄຈສຳຄັນ ຄື ຊັບພະຍາກອນ ທຳ ມ ະ ຊ າ ດ ທ ີ ່ ອ ຸ ດ ົ ມ ສ ົ ມ ບ ຸ ນ, ວ ຽ ກ ງ ານ ວິ ສ ະ ວ ະ ກ ຳ ທ ີ ່ ເ ຂ ັ ້ ມ ແ ຂ ງ ແ ລ ະ ການມີຄູ່ ຮ ່ ວ ມ ມ ື ທ ີ ່ ໝ ັ ກ ແ ໜ ້ ນ ເ ຊ ິ ່ ງ ໂ ຄ ງ ກ ານ ວ ິ ລ ະ ອ າ ດ ສ ະ ພ ອ ນ ມ ີ ຄ ົ ບ ທ ັ ້ ງ 3 ປ ັ ດ ໄ ຈ ນ ີ ້ .

ພ້ອມກັນນັ້ນ, ບໍລິສັດຍັງໄດ້ໃຫ້ຄຳ ໝັ້ນສັນຍາວ່າ ຈະພັດທະນາໂຄງການດ້ວຍ ຄວາມໂປ່ງໃສ, ມີຄວາມຮັບຜິດຊອບ ແລະ ຍຶດຖືມາດຕະຖານສູງສຸດເທົ່າທີ່ຈະ ເປັນໄປໄດ້ ໂດຍຄຳນຶງເຖິງຜົນປະໂຫຍດ ໄລຍະຍາວຂອງປະຊາຊົນລາວ.

ໃນຂັ້ນຕໍ່ໄປ ຜູ້ພັດທະນາຈະສືບຕໍ່ ວິເຄາະຂໍ້ມູນການວັດແທກລົມ, ປະເມີນ ຜົນຜະລິດໄຟຟ້າ, ສຳຫຼວດພຸມສັນຖານ ແລະ ທໍລະນີວິທະຍາ ພ້ອມສຳເລັດການ ສຶກສາຄວາມເປັນໄປໄດ້ ແລະ ການອອກ ແບບພື້ນ ຖານ. ນອກນັ້ນ ຍັງຈະສຶກສາ ທາງເລືອກດ້ານກັງຫັນລົມ, ເສັ້ນທາງເຂົ້າ ໂຄງການ, ລະບົບໄຟຟ້າ ແລະ ສິ່ງປຸກສ້າງ ປະກອບ ຄວບຄູ່ກັບແຜນ ການເຊື່ອມຕໍ່, ການສົ່ງ ແລະ ຈຳໜ່າຍໄຟຟ້າ. ສ່ວນຈຸດ ເຊື່ອມຕໍ່ ແລະ ຕະຫລາດຮັບຊື້ໄຟຟ້າ ຈະ ກຳນົດຕາມຜົນການສຶກສາ, ຂໍ້ຕົກລົງ ແລະ ການອະນຸມັດທີ່ກ່ຽວຂ້ອງ.

◆ ເຫດການ · 13:19 ໂມງ · ອ່ານ 27 ຄັ້ງ

ເຕືອນໄພອຸກອາດ! ໂຈນຂີ່ລົດ PCX ໃຊ້ປືນຈີ້ ແລະ ຍິງ ຫວັງຊິງຊັບສາຍຄໍ ແຖວ ບ້ານນາທົ່ມ ຍິງຜູ້ເສຍຫາຍບາດເຈັບສາຫັດ



ເກີດເຫດຄົນຮ້າຍຂີ່ລົດຈັກ PCX ສີຂາວ ບໍ່ມີປ້າຍທະບຽນ ຕິດຕາມຜູ້ເສຍຫາຍຈາກ 4 ແຍກນາທົ່ມ ກ່ອນໃຊ້ປືນຈີ້ຊິງສາຍຄໍຢູ່ເຂດທາງປ່ຽວ ແຕ່ຜູ້ເສຍຫາຍບໍ່ຍອມຈອດລົດ ຈຶ່ງຖືກຄົນຮ້າຍຍິງໃສ່ຂາ 1 ນັດ ບາດເຈັບສາຫັດ ພ້ອມເຕືອນປະຊາຊົນໃຫ້ຫຼີກລ່ຽງການທຽວທາງຊອຍປ່ຽວ.

ວັນທີ 18 ພະຈິກ 2026: ໄດ້ມີຜູ້ໃຊ້ສື່ສັງຄົມອອນລາຍ ໂພດແຈ້ງເຕືອນໄພສັງຄົມ ຫຼັງຈາກນ້ອງຊາຍຂອງຕົນຖືກຄົນຮ້າຍໃຊ້ອາວຸດປືນຈີ້ຊິງຊັບ ແລະ ຍິງຈົນໄດ້ຮັບບາດເຈັບສາຫັດ ໃນຕອນເຊົ້າຂອງວັນທີ 18 ພະຈິກ 2026 ເວລາປະມານ 07:54 - 07:59 ນາທີ.

ລຳດັບເຫດການ ແລະ ອາການຜູ້ເສຍຫາຍ

ຈຸດເກີດເຫດ. ຄົນຮ້າຍໄດ້ຂີ່ລົດຈັກຕິດຕາມຜູ້ເສຍຫາຍມາຕັ້ງແຕ່ເຂດ 4 ແຍກນາທົ່ມ. ເມື່ອມາຮອດບໍລິເວນທາງປ່ຽວ ຊ່ວງທາງໂຄ້ງໝອງຕໍ ລັດໃສ່ປ່າໄມ້, ຄົນຮ້າຍໄດ້ໃຊ້ອາວຸດປືນຈີ້ຂົ່ມຂູ່ ແລະ ພະຍາຍາມດຶງເອົາສາຍຄໍ 2 ຄັ້ງແຕ່ບໍ່ສຳເລັດ.

ການກໍ່ເຫດ ແລະ ການຫຼົບໜີ. ເນື່ອງຈາກຜູ້ເສຍຫາຍບໍ່ຍອມຈອດລົດ, ຄົນຮ້າຍຈຶ່ງໃຊ້ປືນຍິງໃສ່ຂາຂອງຜູ້ເສຍຫາຍ 1 ນັດ ກ່ອນຈະຂີ່ລົດຫຼົບໜີກັບໄປທາງເສັ້ນ 4 ແຍກນາທົ່ມ. ປັດຈຸບັນ, ຜູ້ເສຍຫາຍມີອາການບາດເຈັບສາຫັດ ແລະ ໄດ້ຮັບການປິ່ນປົວຈາກແພດໝໍແລ້ວ.

ຮູບພັນສັນຖານຂອງຄົນຮ້າຍ (ເພື່ອຊ່ວຍຕິດຕາມເບາะແສ)

ພາຫະນະ. ລົດຈັກ Honda PCX ສີຂາວ ບໍ່ມີປ້າຍທະບຽນ.

ລັກສະນະຕົວບຸກຄົນ. ຮູບຮ່າງຈ່ອຍ, ສູງປະມານ 160 ຊັງຕີແມັດຂຶ້ນໄປ, ຜິວແທນ (ຜິວສີນ້ຳເຜິ້ງ).

ການແຕ່ງກາຍ. ໃສ່ໝວກກັນນ໊ອກສີດຳ, ເສື້ອແຂນຍາວ, ໂສ້ງຢີນຂາຍາວ ແລະ ເກີບສີຂາວ.

ຄຳເຕືອນເຖິງປະຊາຊົນ

ທາງຄອບຄົວຜູ້ເສຍຫາຍ ໄດ້ຝາກເຕືອນໄປຍັງພໍ່ແມ່ປະຊາຊົນ ໂດຍສະເພາະຜູ້ທີ່ສັນຈອນຜ່ານເຂດບ້ານນາທົ່ມ ແລະ ເຂດດົງໂດກ ໃຫ້ເພີ່ມຄວາມລະມັດລະວັງ ຕົວເປັນພິເສດ. ແນະນຳໃຫ້ຫຼີກລ່ຽງການໃຊ້ເສັ້ນທາງຊອຍ ຫຼື ທາງປ່ຽວ ແລະ ຄວນເລືອກທຽວເສັ້ນທາງໃຫຍ່ເພື່ອຄວາມປອດໄພ.

(ຫາກທ່ານໃດພົບເຫັນບຸກຄົນທີ່ມີລັກສະນະດັ່ງກ່າວ ຫຼື ມີເບาะแส ສາມາດແຈ້ງຂໍ້ມູນໃຫ້ເຈົ້າໜ້າທີ່ຕຳຫຼວດ ຫຼື ຄອບຄົວຜູ້ເສຍຫາຍຊາບໄດ້)

◆ ເຫດການ · 11:34 ໂມງ · ອ່ານ 15 ຄັ້ງ

ເຈົ້າໜ້າທີ່ບຸກກັກຕົວກຸ່ມສໍ້ໂກງຊັບທາງອິນເຕີເນັດ ສັນຊາດເກົາຫຼີໃຕ້ 5 ຄົນ ຢູ່ບ້ານໂພນປ່າເປົ້າ



ໃນວັນທີ 17 ພະຈິກ 2026 ເຈົ້າໜ້າທີ່ໜ່ວຍສະເພາะกิด ກะຊວງປ້ອງກັນຄວາມສະຫງົບ ໄດ້ປະຕິບັດການມ້າງກຸ່ມກໍ່ອາຊະຍະກຳທາງອິນເນັດ ຢູ່ເຮືອນໃຫ້ເຊົ່າ ເຂດບ້ານໂພນປ່າເປົ້າ ເມືອງສີສັດຕະນາກ ນະຄອນຫຼວງວຽງຈັນ ສາມາດກັກຕົວຜູ້ຖືກຫາໄດ້ 5 ຄົນ ເປັນຄົນສັນຊາດ ເກົາຫຼີໃຕ້ (ສ ເກົາຫຼີ).

ພ້ອມຢຶດເຄື່ອງຂອງກາງທີ່ນຳໃຊ້ເຂົ້າໃນການກະທຳຜິດ ມີ ຄອມພິວເຕີຕັ້ງໂຕະ 14 ເຄື່ອງ, ຄອມພິວເຕີໂນດບຸກ 7 ໜ່ວຍ, ແທັບເລັດ 2 ເຄື່ອງ, ໂທລະສັບມືຖື 10 ເຄື່ອງ ແລະ ຢາສູບໄຟຟ້າ 49 ອັນ.

ທີ່ມາ: ຄວາມສະຫງົບ Lao Security News

ເຫດການ · 14:54 ໂມງ · ອ່ານ 12 ຄັ້ງ

ປກສ ເມືອງແປກ ກວາດລ້າງແກ້ງລັກລົດຈັກ ກັກຕົວຜູ້ຖືກຫາ 14 ຄົນ ພ້ອມຢຶດຂອງກາງ 48 ຄັນ



ກຳລັງເຈົ້າໜ້າທີ່ ປກສ ເມືອງແປກ ແຂວງຊຽງຂວາງ ສະໜຸບຜົນງານການປາບປາມອາຊະຍາກຳລັກຊັບ ໃນໄລຍະ 10 ເດືອນຜ່ານມາ ສາມາດກັກຕົວຜູ້ຖືກຫາໄດ້ 14 ຄົນ ພ້ອມຢຶດລົດຈັກຂອງກາງໄດ້ເຖິງ 48 ຄັນ ພ້ອມເຕືອນປະຊາຊົນໃຫ້ມີສະຕິລະວັງຕົວໃນການປົກປັກຮັກສາຊັບສິນ.

ໃນໄລຍະເດືອນມັງກອນ ຫາ ເດືອນຕຸລາ 2026 ທີ່ຜ່ານມາ, ກຳລັງເຈົ້າໜ້າທີ່ກອງບັນຊາການ ປກສ ເມືອງແປກ ແຂວງຊຽງຂວາງ ໄດ້ເອົາໃຈໃສ່ເຄື່ອນໄຫວຕິດຕາມ, ກວດກາ ແລະ ປາບປາມບັນດາກຸ່ມແກ້ງທີ່ລັກລອບກໍ່ເຫດລັກຊັບພິນລະເມືອງ (ລັກລົດຈັກ) ໃນຂອບເຂດຄວາມຮັບຜິດຊອບຢ່າງຕໍ່ເນື່ອງ.

ຜົນງານການປາບປາມ ແລະ ຢຶດຂອງກາງ

ຜ່ານການລົງປະຕິບັດໜ້າທີ່ຕົວຈິງ, ເຈົ້າໜ້າທີ່ສາມາດມ້າງກຸ່ມແກ້ງລັກລົດຈັກ ແລະ ກັກຕົວຜູ້ຖືກຫາມາດຳເນີນຄະດີໄດ້ ຈຳນວນ 14 ຄົນ ພ້ອມທັງກວດຢຶດຂອງກາງປະເພດ ລົດຈັກໄດ້ຈຳນວນ 48 ຄັນ. ຕົວເລກດັ່ງກ່າວສະທ້ອນໃຫ້ເຫັນເຖິງບັນຫາອາຊະຍາກຳລັກຊັບ ທີ່ທຸກພາກສ່ວນໃນສັງຄົມຕ້ອງໄດ້ຮ່ວມມືກັນເຝົ້າລະວັງ ແລະ ສະກັດກັ້ນຢ່າງເຂັ້ມງວດ.

ຄຳແນະນຳ ແລະ ການເຕືອນໄພ

ເພື່ອປ້ອງກັນບໍ່ໃຫ້ຕົກເປັນເຫຍື່ອຂອງກຸ່ມຄົນບໍ່ດີ, ເຈົ້າໜ້າທີ່ໄດ້ຮຽກຮ້ອງມາຍັງພໍ່ແມ່ປະຊາຊົນທຸກທ່ານ ຈົ່ງເພີ່ມທະວີຄວາມລະມັດລະວັງໃນການເກັບຮັກສາພາຫະນະຂອງຕົນເອງ ໂດຍຄວນລັອກຄໍລົດ ຫຼື ໃສ່ກະແຈລັອກລໍ້ໃຫ້ແໜ້ນໜາ ທຸກຄັ້ງ ແລະ ຫຼີກລ່ຽງການຈອດລົດປະໄວ້ໃນສະຖານທີ່ປ່ຽວ ຫຼື ບ່ອນທີ່ຂາດຄວາມປອດໄພ.

ທີ່ມາ: ຂ່າວ ປກສ ແຂວງຊຽງຂວາງ

ໂຄສະນາ

ລົງໂຄສະນາ ໃນ ມະຫາສານ ລາຍວັນ

ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ

WhatsApp 020 5888 6182

ລາຄານ້ຳມັນ, ເງິນ, ຄຳ, ຫວຍ ແລະ ອາກາດ — ສົດທຸກມື້

ເບິ່ງຕົວເລກລ່າສຸດ ທີ່ mahaxan.com/today · ໜ້າ 18 ໃນສະບັບນີ້

◆ ເຕັກໂນໂລຊີ · 15:46 ໂມງ · ອ່ານ 7 ຄັ້ງ

ເກົາຫຼີໃຕ້ສົ່ງອອກທະລຸ 1 ລ້ານລ້ານໂດລາ ຄັ້ງທຳອິດໃນປະຫວັດສາດ ໄດ້ແຮງໜູນຈາກຄວາມຕ້ອງການຊິບທີ່ແຂງແກ່ນ



ກະຊວງການຄ້າ, ອຸດສາຫະກຳ ແລະ ຊັບພະຍາກອນ ຂອງເກົາຫຼີໃຕ້ ເປີດເຜີຍໃນມື້ນີ້ ວັນທີ 19 ພະຈິກ ວ່າ ມູນຄ່າການສົ່ງອອກຂອງເກົາຫຼີໃຕ້ທະລຸລະດັບ 1 ລ້ານລ້ານໂດລາສະຫະລັດເປັນຄັ້ງທຳອິດໃນປະຫວັດສາດ ໂດຍໄດ້ຮັບແຮງໜູນຈາກຄວາມຕ້ອງການເຊມິຄອນດັກເຕີທີ່ແຂງແກ່ນທົ່ວໂລກ.

ກະຊວງ ລາຍງານວ່າ ມູນຄ່າການສົ່ງອອກສະສົມຂອງເກົາຫຼີໃຕ້ນັບຕັ້ງແຕ່ຕົ້ນປີ 2026 ທະລຸ 1 ລ້ານລ້ານໂດລາສະຫະລັດ ໃນເວລາ 14:09 ໂມງ ຂອງມື້ນີ້ ຕາມເວລາທ້ອງຖິ່ນ ນັບເປັນປະເທດທີ 4 ຂອງໂລກທີ່ສາມາດສ້າງສະຖິຕິດັ່ງກ່າວໄດ້ ຕໍ່ຈາກສະຫະລັດອາເມຣິກາ, ຈີນ ແລະ ເຢຍລະມັນ ໂດຍຄວາມສຳເລັດຫຼ້າສຸດເກີດຂຶ້ນຫຼັງຈາກມູນຄ່າການສົ່ງອອກຂອງເກົາຫຼີໃຕ້ທະລຸ 7 ແສນລ້ານໂດລາສະຫະລັດເມື່ອປີທີ່ຜ່ານມາ.

ກະຊວງ ລະບຸໃນເອກະສານຂ່າວ ປະຊາສຳພັນວ່າ ເຊມິຄອນດັກເຕ ແລະ ຄອມພິວເຕີເປັນປັດໄຈຫຼັກທີ່ຂັບເຄື່ອນການເຕີບໂຕຂອງການສົ່ງອອກໃນປີນີ້ ຂະນະທີ່ບໍລິສັດເທັກໂນໂລຊີທົ່ວໂລກເລັ່ງເພີ່ມການລົງທຶນໃນໂຄງສ້າງພື້ນຖານດ້ານປັນຍາປະດິດ ນອກຈາກນີ້ ລາຄາຊິບໜ່ວຍຄວາມຈຳທີ່ປັບຕົວສູງຂຶ້ນຍັງຊ່ວຍເພີ່ມມູນຄ່າການສົ່ງອອກ ແລະ ຕອກຢ້ຳສະຖານະຂອງເກົາຫຼີໃຕ້ໃນຖານະຜູ້ສະໜອງລາຍສຳຄັນໃນຫ່ວງໂສ້ອຸປະທານປັນຍາປະດິດລະດັບໂລກ.

ໃນຊ່ວງເດືອນມັງກອນຫາຕຸລາ ມູນຄ່າການສົ່ງອອກເຊມິຄອນດັກເຕີເພີ່ມຂຶ້ນເກືອບສາມເທົ່າ ສູ່ລະດັບ 3.977 ແສນລ້ານໂດລາສະຫະລັດ ຈາກລະດັບ 1.354 ແສນລ້ານໂດລາສະຫະລັດໃນຊ່ວງດຽວກັນຂອງປີກ່ອນ ແລະ ຄິດເປັນສັດສ່ວນສູງເຖິງ 42.7 ເປີເຊັນ ຂອງມູນຄ່າການສົ່ງອອກລວມທັງໝົດ.

ຂະນະດຽວກັນ ການສົ່ງອອກຜະລິດຕະພັນປິໂຕຣເຄມີ, ເຮືອ ແລະ ຈໍສະແດງຜົນ ຍັງມີສ່ວນຊ່ວຍສະໜັບສະໜູນການເຕີບໂຕ ແມ້ປະເຊີນກັບມາດຕະການກີດກັນທາງການຄ້າທີ່ເພີ່ມຂຶ້ນ ແລະ ຄວາມຕຶງຄຽດໃນຕາເວັນອອກກາງທີ່ຍືດເຍື້ອກໍຕາມ ດ້ານມູນຄ່າການສົ່ງອອກເຄື່ອງສຳອາງ ແລະ ເວດຊະພັນກ່ຳສ້າງສະຖິຕິສູງສຸດເປັນປະຫວັດການເຊັ່ນກັນ.

ເມື່ອພິຈາລະນາຈາກຈຸດໝາຍປາຍທາງຂອງການສົ່ງອອກ ການສົ່ງອອກໄປຍັງຕະຫຼາດສຳຄັນ ອາທິ ສະຫະລັດ, ຈີນ, ຍີ່ປຸ່ນ ແລະ ອາຊຽນເວັ້ນອອກສຽງໃຕ້ ຍັງຄົງແຂງແກ່ນ ຂະນະທີ່ການສົ່ງອອກໄປຍັງຕະຫຼາດເກີດໃໝ່ ເຊັ່ນ ອິນເດຍ ແລະ ລາຕິນອາເມຣິກາ ກໍ່ເຕີບໂຕເຊັ່ນກັນ.

ເມື່ອປີທີ່ຜ່ານມາ ການສົ່ງອອກໄປຍັງສະຫະລັດຫຼຸດລົງ 3.8 ເປີເຊັນ ເນື່ອງຈາກມາດຕະການຂຶ້ນພາສີນຳເຂົ້າຂອງປະທານາທິບໍດີ ໂດນັນທ໌ ທຣຳປ໌ ແຕ່ຫຼັງຈາກນັ້ນກ່ຳຟື້ນຕົວຂຶ້ນ ເນື່ອງຈາກຄວາມຕ້ອງການຊິບໜ່ວຍຄວາມຈຳສຳລັບໃຊ້ໃນເຊີບເວີ ແລະ ດາຕ້າເຊັນເຕີປັນຍາປະດິດປັບຕົວເພີ່ມຂຶ້ນ.

ທັງນີ້ ແມ້ວ່າຍອດສົ່ງອອກຈະສ້າງສະຖິຕິສູງສຸດເປັນປະຫວັດການ ແຕ່ກະຊວງເຕືອນວ່າຜູ້ສົ່ງອອກຍັງຄົງປະເຊີນຄວາມທ້າທາຍຫຼາຍປະການ ທັງຄວາມຜັນຜວນຂອງລາຄາເຊມິຄອນດັກເຕ ແລະ ຜະລິດຕະພັນປິໂຕຣເຄມີ, ມາດຕະການກີດກັນທາງການຄ້າທີ່ເພີ່ມຂຶ້ນໃນສະຫະລັດ ແລະ ສະຫະພາບເອີຣົບ ຕະຫຼອດຈົນການແຂ່ງຂັນທີ່ທະວີຄວາມຮຸນແຮງຂຶ້ນທ່າມກາງພາວະອຸປະທານລົ້ນຕະຫຼາດທົ່ວໂລກ.

ກະຊວງ ລະບຸວ່າ ເພື່ອໃຫ້ການສົ່ງອອກເຕີບໂຕຢ່າງຕໍ່ເນື່ອງ ລັດຖະບານຈະເສີມສ້າງຄວາມຮ່ວມມືທາງການຄ້າ ພ້ອມສ້າງສະພາບແວດລ້ອມທາງທຸລະກິດທີ່ມີສະຖຽນລະພາບ ແລະ ຄາດການໄດ້ ສຳລັບບໍລິສັດເກົາຫຼີໃຕ້ ຄວບຄູ່ໄປກັບການສົ່ງເສີມອຸດສາຫະກຳໃໝ່ທີ່ມີສັກຍະພາບໃນການເຕີບໂຕ.

ຄັງ ຄຳ-ຊານ ລັດຖະມົນຕີຊ່ວຍວ່າການກະຊວງ ດ້ານການຄ້າ ແລະ ການລົງທຶນ ກ່າວວ່າ ລັດຖະບານຈະມຸ່ງເນັ້ນການພັດທະນາອຸດສາຫະກຳໃໝ່ທີ່ມີສັກຍະພາບໃນການເຕີບໂຕ ອາທິ ສິນຄ້າອຸປະໂພກບໍລິໂພກ, ຜະລິດຕະພັນດ້ານການປ້ອງກັນປະເທດ ແລະ ເຄື່ອງປະຕິກອນນິວເຄລຍ ເພື່ອຫຼຸດການເພິ່ງພາການສົ່ງອອກເຊມິຄອນດັກເຕ.

ທ່ານ ຄັງ ປະເມີນວ່າ ການສົ່ງອອກເຊມິຄອນດັກເຕຈະຍັງຄົງເປັນກົນໄກຫຼັກທີ່ຂັບເຄື່ອນການສົ່ງອອກໂດຍລວມຢ່າງໜ້ອຍຈົນເຖິງໄຕມາດ 3 ຂອງປີ 2027 ໂດຍໄດ້ຮັບແຮງໜູນຈາກຄວາມຕ້ອງການທີ່ແຂງແກ່ນຂອງບໍລິສັດເທັກໂນໂລຊີລາຍໃຫຍ່ທີ່ກຳລັງທຸ່ມລົງທຶນກ່ຳສ້າງດາຕ້າເຊັນເຕ.

ໂຄສະນາ
ລົງໂຄສະນາ ໃນ ມະຫາສານ ລາຍວັນ
ໜັງສືພິມ PDF ປະຈຳວັນ · ຈອງເປັນລາຍວັນ, ລາຍອາທິດ ຫຼື ລາຍເດືອນ · ທີມງານອອກແບບໃຫ້ຟຣີ
WhatsApp 020 5888 6182

◆ ສາລະໜ້າຮູ້ · 09:55 ໂມງ · ອ່ານ 8 ຄັ້ງ

ນ້ຳປະປາ ບໍ່ແກ້ວ ປອດສານໜູ 100% ຜ່ານມາດຕະຖານທຸກຈຸດ



ລັດວິສາຫະກິດນ້ຳປະປາ ແຂວງບໍ່ແກ້ວ ອອກແຈ້ງການຢືນຢັນຜົນກວດຄຸນນະພາບນ້ຳດິບຈາກແມ່ນ້ຳຂອງ 5 ຈຸດສຳຄັນ ພົບວ່າປອດສານໜູ 100% (0 mg/L) ປະຊາຊົນສາມາດອຸປະໂພກ ແລະ ບໍລິໂພກໄດ້ຢ່າງປົກກະຕິ.

ແຂວງບໍ່ແກ້ວ – ວັນທີ 18 ພະຈິກ 2026: ເພື່ອຄາຍຄວາມກັງວົນຂອງພໍ່ແມ່ປະຊາຊົນ ຈາກກະແສຂ່າວໃນສື່ສັງຄົມອອນລາຍ ກ່ຽວກັບບັນຫາການປົນເປື້ອນສານໜູ (Arsenic - As) ໃນແມ່ນ້ຳຂອງ, ລັດວິສາຫະກິດນ້ຳປະປາ ແຂວງບໍ່ແກ້ວ ໄດ້ອອກມາຢືນຢັນຢ່າງເປັນທາງການແລ້ວວ່າ ນ້ຳປະປາທົ່ວແຂວງບໍ່ແກ້ວ ມີຄວາມປອດໄພ 100% ແລະ ບໍ່ພົບສານໜູປົນເປື້ອນແຕ່ຢ່າງໃດ.

ລົງພື້ນທີ່ເກັບຕົວຢ່າງຢ່າງຮີບດ່ວນ 5 ຈຸດສຳຄັນ

ໃນລະຫວ່າງວັນທີ 9, 11, 13 ແລະ 17 ພະຈິກ 2026 ທີ່ຜ່ານມາ, ທີມງານວິຊາການຂອງລັດວິສາຫະກິດນ້ຳປະປາ ແຂວງບໍ່ແກ້ວ ໄດ້ລົງເກັບຕົວຢ່າງນ້ຳດິບຈາກແມ່ນ້ຳຂອງ ໃນ 5 ຈຸດຫຼັກ ເພື່ອນຳມາວິເຄາະຄຸນນະພາບຢ່າງລະອຽດ ຄື:

1. ເຂດພື້ນທີ່ບໍລິການ ເມືອງຫ້ວຍຊາຍ (2 ຈຸດ):

ສະຖານີສູບນ້ຳຂອງ (ນ້ຳດິບ) ຢູ່ຈຸດອິນເທັກ ໂຮງຮຽນມັດທະຍົມສົມບຸນ (ມ ປາຍ) ຫ້ວຍຊາຍ.

ສະຖານີສູບນ້ຳຂອງ (ນ້ຳດິບ) ຢູ່ເຮືອນແພ ບ້ານມຸງຄຸນສິນ.

2. ເຂດພື້ນທີ່ບໍລິການ ເມືອງຕົ້ນເຜິ້ງ (3 ຈຸດ):

ສະຖານີສູບນ້ຳຂອງ (ນ້ຳດິບ) ຢູ່ບ້ານໂພນໂຮມ.

ນ້ຳຂອງ (ນ້ຳດິບ) ຢູ່ເຂດດອນຊາວ.

ສະຖານີສູບນ້ຳຂອງ (ນ້ຳດິບ) ຢູ່ບ້ານດອນຟອງ ເຂດນ້ຳເກັ່ງ.

ສະຫຼຸບຜົນການວິເຄາະ: ປອດໄພຜ່ານເກນມາດຕະຖານ

ຈາກການກວດກາຕົວຈິງທັງ 5 ຈຸດ ພົບວ່າ: ຄ່າສານໜູເທົ່າກັບ 0 mg/L (ບໍ່ພົບການປົນເປື້ອນ) ແລະ ຜ່ານມາດຕະຖານຄວາມປອດໄພທຸກປະການ. ດັ່ງນັ້ນ, ພໍ່ແມ່ປະຊາຊົນ ແລະ ລູກຄ້າຜູ້ຊົມໃຊ້ນ້ຳປະປາທຸກທ່ານ ສາມາດນຳໃຊ້ນ້ຳເພື່ອການອຸປະໂພກ ແລະ ບໍລິໂພກໄດ້ຕາມປົກກະຕິຢ່າງສະບາຍໃຈ.

ຫຼັກຖານຢັ້ງຢືນຢ່າງເປັນທາງການ

ເພື່ອສ້າງຄວາມໂປ່ງໃສ ແລະ ຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ຂະແໜງໂຮງງານຜະລິດນ້ຳປະປາ ໄດ້ອອກໃບລາຍງານຜົນການກວດກາຄຸນນະພາບນ້ຳຢ່າງເປັນທາງການ ຕາມເອກະສານອ້າງອີງດັ່ງນີ້:

ໃບລາຍງານເລກທີ 7700/ ລນຂ.ບກ, ລົງວັນທີ 17/11/2026

ໃບລາຍງານເລກທີ 7725/ ລນຂ.ບກ, ລົງວັນທີ 18/11/2026

ທີ່ມາ: ໜັງສືພິມບໍ່ແກ້ວ Bokeo Newspaper

ຂ່າວຕ່າງປະເທດ

◆ ຂ່າວຕ່າງປະເທດ · 16:41 ໂມງ · ອ່ານ 11 ຄັ້ງ

ຣັດເຊຍເປີດເຜີຍ ສົງຄາມຢູເຄຣນເປັນປະເດັນຫຼັກໃນການຫາລື ທຣຳປ໌-ປູຕິນ



ຢູຣີ ອຸຊາຄອຟ ທີ່ປຶກສາດ້ານນະໂຍບາຍຕ່າງປະເທດຂອງປະທານາທິບໍດີ ວະລາດີເມຍ ປູຕິນ ຜູ້ນຳຣັດເຊຍ ເປີດເຜີຍໃນມື້ນີ້ (19 ພະຈິກ) ວ່າ ສົງຄາມໃນຢູເຄຣນເປັນປະເດັນຫຼັກໃນການຫາລືລະຫວ່າງປູຕິນກັບ ໂດນັລ ທຣຳປ໌ ປະທານາທິບໍດີສະຫະລັດฯ.

ອຸຊາຄອຟລະບຸວ່າ ຜູ້ນຳທັງສອງຍັງໄດ້ຫາລືກ່ຽວກັບຄວາມສຳພັນລະຫວ່າງຣັດເຊຍກັບສະຫະລັດฯ ລວມທັງການພົບປະສາມຝ່າຍກັບ ສີ ຈິ້ນຜິງ ປະທານາທິບໍດີຈີນ ເຊິ່ງມີກຳນົດຈັດຂຶ້ນນອກກອບການປະຊຸມສຸດຍອດຄວາມຮ່ວມມືທາງເສດຖະກິດອາຊີ-ປາຊີຟິກ (APEC) ທີ່ເມືອງເຊີນເຈິ້ນ ປະເທດຈີນ.

ໃນຊ່ວງເລີ່ມຕົ້ນການຫາລື ທຣຳປ໌ ກ່າວກັບປູຕິນວ່າ ທັງສອງມີຄວາມສຳພັນທີ່ດີຕໍ່ກັນມາດົນນານ ແລະຮູ້ຈັກກັນມາເປັນເວລາດົນແລ້ວ ພ້ອມທັງສະແດງຄວາມຫວັງວ່າ ການພົບປະຄັ້ງນີ້ຈະນຳໄປສູ່ຜົນ

ຕໍ່ໜ້າ 10

ຣັດເຊຍເປີດເຜີຍ ສົງຄາມຢູເຄຣນເປັນປະເດັນຫຼັກໃນການຫາລື ... (ຕໍ່ຈາກໜ້າ 9)

ລັບທີ່ດີຫຼາຍປະການ ຫຼືຢ່າງໜ້ອຍກໍເປັນຈຸດເລີ່ມຕົ້ນຂອງຄວາມຄືບໜ້າ.

ການພົບປະຄັ້ງນີ້ເປັນການຫາລືແບບພົບໜ້າກັນຄັ້ງທີ 2 ລະຫວ່າງທຣຳ ກັບປູຕິນ ຫຼັງຈາກທັງສອງເຄີຍພົບກັນທີ່ ລັດອາລາສກາ ໃນເດືອນສິງຫາ 2025 ແຕ່ການເຈລະຈາໃນຄັ້ງນັ້ນບໍ່ສາມາດນຳໄປສູ່ການຍຸດຕິສົງຄາມໄດ້.

ແນວໃດກໍຕາມ ການຫາລືລະຫວ່າງ ສະຫະລັດฯ ກັບຣັດເຊຍ ໂດຍບໍ່ມີຕົວແທນຢູເຄຣນ ຫຼືປະເທດໃນເອີຣົບ ເຂົ້າຮ່ວມ ເຮັດໃຫ້ຫຼາຍຝ່າຍ ໂດຍສະເພາະໃນເອີຣົບ ເກີດຄວາມກັງວົນວ່າ ທັງສອງປະເທດອາດຫາລືກ່ຽວກັບແນວທາງຍຸດຕິສົງຄາມໃນຢູເຄຣນ ໂດຍທີ່ລັດຖະບານຢູເຄຣນ ແລະປະເທດເອີຣົບບໍ່ໄດ້ມີສ່ວນຮ່ວມ.

ສ່ວນການປະຊຸມສາມຝ່າຍນັ້ນ ເຈົ້າໜ້າທີ່ທຳນຽບຂາວເຄີຍລະບຸກ່ອນໜ້ານີ້ວ່າ ທຣຳປ໌ບໍ່ມີແຜນຈະຍົກປະເດັນສົງຄາມຢູເຄຣນຂຶ້ນມາຫາລືໃນການປະຊຸມສາມຝ່າຍ ເຖິງແມ່ນວ່າກ່ອນໜ້ານີ້ເຈົ້າຕົວເຄີຍສົ່ງສັນຍານວ່າອາດນຳເລື່ອງນີ້ເຂົ້າສູ່ການຫາລືກໍຕາມ.

ທັງນີ້ ນັກວິເຄາະມອງວ່າ ການປະຊຸມສາມຝ່າຍລະຫວ່າງຜູ້ນຳຂອງສາມປະເທດມະຫາອຳນາດດ້ານນິວເຄລຍ ຄົງບໍ່ນ່າຈະນຳໄປສູ່ຂໍ້ຕົກລົງສຳຄັນໄດ້ ເນື່ອງຈາກທັງສາມຝ່າຍຍັງມີຄວາມເຫັນແຕກຕ່າງກັນຢ່າງຫຼາຍໃນຫຼາຍປະເດັນ ທັງສົງຄາມຢູເຄຣນ, ອີຣ່ານ, ອາວຸດນິວເຄລຍ ແລະການຄ້າ.

◆ ຂ່າວຕ່າງປະເທດ · 16:39 ໂມງ · ອ່ານ 11 ຄັ້ງ

ສຸດທຶ່ງ! ນັກສຳຫຼວດບັນທຶກພາບປາ ແບເຣລາຍ (Barreleye) ຫົວໂປ່ງໃສ ດວງຕາໝຸນໄດ້ ໃຕ້ມະຫາສະໝຸດເລິກເກືອບ 600 ແມັດ



ນັກວິໄຈຈາກສະຖາບັນວິໄຈສັດນ້ຳທະເລ ມອນເຕີເຣຍເບ (MBARI) ສ້າງຄວາມປະຫຼາດໃຈໃຫ້ແກ່ວົງການວິທະຍາສາດ ຫຼັງສາມາດບັນທຶກພາບປາແບເຣລາຍ Barreleye (Macropinna microstoma) ສັດທະເລເລິກທີ່ມີສ່ວນຫົວໂປ່ງໃສ ແລະດວງຕາຮູບທໍ່ທີ່ສາມາດໝຸນປ່ຽນທິດທາງໄດ້ ຢູ່ໃຕ້ມະຫາສະໝຸດປາຊີຟິກ ທີ່ຄວາມເລິກປະມານ 600 ແມັດ.

ໃນລະຫວ່າງການສຳຫຼວດທະເລເລິກພາຍໃຕ້ພາລະກິດ “Diving Deep for Delicate Drifters” ເທິງເຮືອວິໄຈ R/V David Packard ຂອງສະຖາບັນ MBARI, ທ່ານ Steven Haddock ນັກວິທະຍາສາດອາວຸໂສ ພ້ອມທີມງານ ໄດ້ພົບປາ Barreleye (Macropinna microstoma) ໂດຍບັງເອີນ. ທີ່ມາຂອງຮູບ: Kyra Schlining MBARI.

ການພົບເຫັນຄັ້ງນີ້ເກີດຂຶ້ນຫ່າງຈາກຊາຍຝັ່ງລັດຄາລິຟໍເນຍ ປະມານ 90 ກິໂລແມັດ ໃນລະຫວ່າງການສຳຫຼວດທາງທະເລເປັນເວລາ 8 ມື້ ໂດຍທີມນັກວິໄຈໄດ້ນຳໃຊ້ຫຸ່ນຍົນໃຕ້ນ້ຳຄວບຄຸມຈາກທາງໄກ (ROV) ຊື່ Doc Ricketts ເພື່ອບັນທຶກພາບສັດທະເລໃນລະດັບນ້ຳເລິກ.

ສິ່ງທີ່ເຮັດໃຫ້ປາຊະນິດນີ້ໂດດເດັ່ນຄືສ່ວນຫົວທີ່ມີເຍື່ອໃສຄ້າຍໂດມປົກຄຸມ ເຮັດໃຫ້ສາມາດເຫັນດວງຕາຮູບທໍ່ສີຂຽວຢູ່ພາຍໃນໄດ້ຢ່າງຊັດເຈນ. ດວງຕາຂອງມັນປົກກະຕິຈະຫັນຂຶ້ນດ້ານເທິງ ເພື່ອຄອຍສັງເກດເງົາຂອງເຫຍື່ອທີ່ລອຍຢູ່ເໜືອຕົວມັນ ແລະເມື່ອພົບເຫຍື່ອ ດວງຕາກໍສາມາດໝຸນມາທາງດ້ານໜ້າ ເພື່ອຕິດຕາມເຫຍື່ອໃນຂະນະລ່າອາຫານ.

ນອກຈາກນີ້ ເຍື່ອໃສທີ່ປົກຄຸມສ່ວນຫົວຍັງມີໜ້າທີ່ປົກປ້ອງດວງຕາຂອງມັນ ຈາກເຂັມພິດຂອງສັດທະເລຈຳພວກ Siphonophores ເຊິ່ງມີລັກສະນະຄ້າຍແມງກະພຸນ ແລະສາມາດດັກຈັບສັດນ້ຳຂະໜາດນ້ອຍໄວ້ຕາມໜວດພິດໄດ້.

ທີ່ມາຂອງຮູບ: Kyra Schlining MBARI.

ສຳລັບການບັນທຶກພາບໃນຄັ້ງນີ້ ນັກວິໄຈສາມາດສັງເກດປາດັ່ງກ່າວໄດ້ປະມານ 20 ນາທີ ໂດຍໃຊ້ກ້ອງຄວາມລະອຽດສູງ 4K ຕິດຕັ້ງໃນຫຸ່ນຍົນໃຕ້ນ້ຳ ແລະຍັງສາມາດບັນທຶກພາບສາມມິຕິຜ່ານກ້ອງ VR ໄດ້ອີກດ້ວຍ.

ທາງສະຖາບັນວິໄຈມອນເຕີເຣຍເບ (MBARI) ລະບຸວ່າ ນີ້ເປັນການພົບປາ Barreleye ຄັ້ງທີ 11 ຂອງສະຖາບັນໃນຮອບເກືອບ 40 ປີ ຂອງການສຳຫຼວດມະຫາສະໝຸດ ເຊິ່ງຜ່ານມາສະຖາບັນໄດ້ດຳເນີນການສຳຫຼວດດ້ວຍຫຸ່ນຍົນໃຕ້ນ້ຳປະມານ 7,000 ຄັ້ງ ແລະບັນທຶກວິດີໂອໃຕ້ທະເລຫຼາຍກວ່າ 41,000 ຊົ່ວໂມງ.

ການບັນທຶກພາບຄັ້ງນີ້ຍັງເປັນຄັ້ງທຳອິດທີ່ MBARI ສາມາດຖ່າຍພາບປາຊະນິດນີ້ໄດ້ໃນຄວາມລະອຽດ 4K ແລະເປັນການພົບເຫັນຄັ້ງທຳອິດຈາກເຮືອວິໄຈລຸ້ນໃໝ່ David Packard. ໂດຍທາງນັກວິໄຈບໍ່ໄດ້ຈັບປາຂຶ້ນມາຈາກທະເລ ແຕ່ໄດ້ເກັບຮັກສາພາບວິດີໂອເພື່ອນຳໄປສຶກສາພຶດຕິກຳ ແລະລະບົບການມອງເຫັນຂອງສັດທະເລເລິກຊະນິດນີ້ຕໍ່ໄປ.

ການຄົ້ນພົບຄັ້ງນີ້ສະທ້ອນໃຫ້ເຫັນວ່າ ມະຫາສະໝຸດຍັງມີສິ່ງມີຊີວິດທີ່ແປກປະຫຼາດ ແລະມີການປັບຕົວອັນຊັບຊ້ອນຕໍ່ສະພາບແວດລ້ອມທີ່ມີແສງໜ້ອຍໃນທະເລເລິກ ເຊິ່ງຍັງມີຫຼາຍດ້ານທີ່ລໍຖ້າການສຶກສາຄົ້ນຄວ້າຕໍ່ໄປ.

ທີ່ມາ: MBARI

ຮັບ ມະຫາສານ ລາຍວັນ ທາງອີເມວ ຟຣີ

ໜັງສືພິມສະບັບໃໝ່ ສົ່ງເຖິງອີເມວທ່ານ ທຸກເຊົ້າ ກ່ອນເຂົ້າວຽກ. ສະແກນ QR ຫຼື ເຂົ້າ mahaxan.com/newspaper

ຂ່າວຕ່າງປະເທດ · 11:37 ໂມງ · ອ່ານ 10 ຄັ້ງ

ສາມຜູ້ນຳມະຫາອຳນາດ ສະຫະລັດ-ຈີນ-ຣັດເຊຍ ມີກຳນົດປະຊຸມຮ່ວມກັນທີ່ເມືອງ ເຊັນເจิ้ນ ໃນຂອບເอเปค APEC.



ໃນວັນທີ 18 ພະຈິກ 2026 ສຳນັກຂ່າວຕ່າງປະເທດລາຍງານ: ທ່ານ ໂດນັລ ທຣຳ ປະທານາທິບໍດີສະຫະລັດ ມີກຳນົດພົບປະຫາລືສອງຝ່າຍກັບທ່ານ ອະລາດີເມຍ ປູຕິນ ປະທານາທິບໍດີຣັດເຊຍ ທີ່ປະເທດจีน ໃນວັນພະຫັດນີ້ ນອກເหนือจากการประชุมสามฝ่ายร่วมกับท่าน สี จิ้นผิง ประธานประเทศจีน ตามการเปิดเผยของเจ้าหน้าที่สะหะลัด และ ธัดเซย.

ການພົບປະດັ່ງກ່າວເกิดขึ้น ໃນຂະນະທີ່ຄະນະທູດພິเศดของท่าน ทรัมป์ กำลังเพิ่มความพยายามทางการทูต เพื่อชอกหาทางยุติสงครามธัดเซย-ยูเครน โดยการหารือยังมีการประสานกับบันดาผู้นำเอิธิบ ในประเด็นการธับประกันความมั่นคงหลังสงคราม และ แผนการฟื้นฟูเศดถะกิด.

ย่างใดก็ตาม สำนักข่าว Interfax ของธัดเซย ลายงานโดยอ้างคำกล่าวของท่าน ดมิตธิ เปสกอฟ โคสิกวังเครมลินว่า การพบปะระหว่างท่าน ทรัมป์ และ ท่าน ปูติน ในครั้งนี้ จะบ่แม่นการเจรจาสองฝ่ายแบบเต็มรูปแบบ ในระหว่างการประชุมสุดยอด APEC ที่เมืองเซินเจิ้น. ขะนะที่เจ้าหน้าที่สะหะลัดก็ได้ยืนยันแผนการพบปะนี้ แต่บ่ได้ให้ลายละอียดเพิ่มเติม.

ก่อนหน้านี้ ในวันพุด ที่เมืองเซินเจิ้น ท่าน ทรัมป์ และ ท่าน ปูติน ได้พบปะกันในช่วงถ่ายรูบร่วมกับบันดาผู้นำ โดยทั้งสองได้จับมือทักทายกันอย่างสั้นๆ และ แลกปลี่ยนคำเว้ากันพียงสองสามคำ ขะนะที่ยืนอยู่ถัดระข้างของท่าน สี จิ้นผิง เจ้าพาบการประชุม และ พันละยาของท่าน. สำนักข่าวอินเตแฟักส์ ละบุว่า การพบกันในครั้งนั้น บ่ได้มีการสนทนาในประเด็นสำคัญใดๆ.

ด้านท่าน ยูธิ อุชาคอฟ ที่ปึกสาด้านนะโยบายต่างประเทดของวังเครมลิน ก่าอ่า การพบปะระหว่างท่าน ปูติน และ ท่าน ทรัมป์ จะจัดขึ้นพายหลัง การประชุมใหย่ (Plenary Session) ของ (APECAsia-Pacific Economic Cooperation การประชุมความร่วมมือทางเสดถะกิดอาซิ-ปาซิฟิก). โดยคาดว่าจะมีตัวแทนจากะนะผู้แทนของทั้งสองประเทดเข้าร่วมหลายคน.

ทั้งนี้ การพบปะดังกล่าว ยังถึกจับตาว่าจะมีความถืบหน้าในประเด็นการยุดติสงครามในยูเครน และ การอาหลักประกันความมั่นคงหลังสงคราม หรือบ่.

ที่มา: ธอยเตอ

ขาวตางประเทด · 10:45 ໂมງ · ອ่าน 9 ครั้ง

ท่าน สี จิ้นผิง ประธานาธิบดีจีน ต้อนรับ ท่าน โดนัล ทรัมป์ ประธานาธิบดีสะหะลัด ที่สะหนามบินนานาชาดเซินเจิ้น



ที่นะถอนเซินเจิ้น, อันที่ 18 พะจิก ท่าน สี จิ้นผิง ประธานาธิบดีจีน ได้ให้การต้อนรับท่าน โดนัล ทรัมป์ ประธานาธิบดีสะหะลัด ที่สะหนามบินนานาชาดเซินเจิ้น เป่าอัน ในแขวงกวางตุ้ง ทางพากใต้ของจีน ในวันพุด.

“ท่าน สี จิ้นผิง ประธานาธิบดีจีน ให้การต้อนรับท่าน โดนัล ทรัมป์ ประธานาธิบดีสะหะลัด ที่สะหนามบินนานาชาดเซินเจิ้น ในนะถอนเซินเจิ้น แขวงกวางตุ้ง ประเทดจีน ในวันที่ 18 พะจิก 2026. ”

